ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 36 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 26 SEP 2014

**ລາຍງານການເຄື່ອນໄຫວປະຈຳອາທິດ**

**15-19/09/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ເງິນເອີໂຣແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: ຕົວເລກທາງດ້ານເສດຖະກິດຂອງຊິ້ງເຂດເອີຣົບອອກມາດີ ເຫັນໄດ້ຈາກດຸນການຄ້າຂອງເອີຣົບເກີນດຸນເພີ່ມຂຶ້ນ ຈາກ 16,7 ຕື້ເອີໂຣໃນເດືອນ 6/2014 ເປັນ 21,2 ຕື້ເອີໂຣ ໃນເດືອນ 7/2014 ແລະ ຜົນຜະລິດສິນຄ້າອຸດສາຫະກຳຂອງເອີຣົບ ເພີ່ມຂຶ້ນ ຈາກ 0,2% ໃນເດືອນ 6/2014 ເປັນ 2% ໃນເດືອນ 7/2014.

| ສະກຸນເງິນກີບທຽບກັບໂດລາ | 02-09/9/2014 | 10-16/9/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2882 | 1,2941 | -0,46% |
| ເຢນ/ໂດລາ | 106,20 | 107,13 | -0,86% |
| ບາດ/ໂດລາ | 32,08 | 32,24 | -0,49% |
| ເປໂຊ/ໂດລາ | 43,70 | 44,24 | -1,23% |
| ຣູເປັຍ/ໂດລາ | 11.755,89 | 11930,56 | -1,46% |
| ໂດລາສິງກະໂປ/ໂດລາ | 1,2599 | 1,2625 | -0,21% |
| ຢວນ/ໂດລາ | 6,1348 | 6,1477 | -0,21% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 0,27% ຈາກ 93 ໂດລາ/ບາເຣວ ມາເປັນ 92,75 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບປະຈຳອາທິດທີ 5/9/2014 ຂອງສະຫະລັດເພີ່ມຂຶ້ນ ເປັນ

4,09 ລ້ານບາເຣວ ຈາກ 0,6 ລ້ານບາເຣວ ໃນອາທິດຜ່ານມາ ແລະ ຄັງສຳຮອງນ້ຳມັນສຳເລັດຮູບຂອງສະຫະລັດເພີ່ມຂຶ້ນ 2,4 ລ້ານບາເຣວ ຈາກ ຫຼຸດລົງ 2,32 ລ້ານໂດລາ ໃນອາທິດຜ່ານມາ;

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,52% ຈາກ 1.255,76 ໂດລາ/ອອນ ມາເປັນ 1.236,67 ໂດລາ/ອອນ ຍ້ອນນັກລົງທຶນສືບຕໍ່ເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ ເພື່ອເກັງກຳໄລ ຈາກຄວາມຜັນຜວນຂອງເສດຖະກິດໂລກ.

## 2. <u>ສະພາບເສດຖະກິດເງິນຕາພາຍໃນ</u>

### 2.1 <u>ສະພາບອັດຕາແລກປ່ຽນພາຍໃນ</u>

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບເງິນໂດລາ ແຂງຄ່າ 0,06% ສຳລັບອັດຕາ ທຫລ ແຕ່ອ່ອນຄ່າ 0,02% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບເງິນບາດ ແຂງຄ່າ 0,48% ສຳລັບອັດຕາ ທທກ ແລະ ແຂງຄ່າ 0,39% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ<br>03-09/09/2014 | | | ອາທິດນີ້<br>10-16/09/2014 | | | % (+) ເງິນກີບແຂງ/<br>(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| <u>ອັດຕາທະຄານ[1]</u> | | | | | | | | | |
| ໂດລາ | 8.027,25 | 8.058,81 | 8.043,61 | 8.027,40 | 8.056,82 | 8.038,86 | -0,002% | 0,02% | 0,06% |
| ບາດ | 251,11 | 252,32 | 251,95 | 249,86 | 251,12 | 250,76 | 0,50% | 0,48% | 0,48% |
| <u>ອັດຕາຕະຫຼາດ</u> | | | | | | | | | |
| ໂດລາ | 8.032,33 | 8.073,87 | 8.053,10 | 8.034,60 | 8.074,67 | 8.054,63 | -0,03% | -0,01% | -0,02% |
| ບາດ | 251,91 | 252,60 | 252,25 | 250,78 | 251,78 | 251,28 | 0,45% | 0,32% | 0,39% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ,<br>(-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,06% | 0,19% | 0,12% | 0,09% | 0,22% | 0,20% | | | |
| ບາດ | 0,32% | 0,11% | 0,12% | 0,36% | 0,27% | 0,21% | | | |

### 2.2 <u>ສະພາບຖານເງິນຕາ ແລະ ປະລິມານເງິນ M2</u>

- ຖານເງິນຕາ ປະຈຳອາທິດນີ້ (ຮອດວັນທີ 15/09/2014 ຕົວເລກເບື້ອງຕົ້ນ) ມີຍອດເຫຼືອ 22.252,88 ຕື້ກີບ ເພີ່ມຂຶ້ນ 5,55% ທຽບໃສ່ວັນທີ 08/09/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 54,78%.
- ປະລິມານເງິນ $M_2$ (ຕົວເລກເບື້ອງຕົ້ນ) ມີຍອດເຫຼືອ 48.662,11 ຕື້ກີບ ເພີ່ມຂຶ້ນ 2,01% ເມື່ອທຽບໃສ່ວັນທີ 08/09/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,26%.

### 2.3 <u>ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ</u>

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດນີ້ (ວັນທີ 09-15/09/2014) ເຫັນວ່າ ທທກ ຂາຍໂດລາສຸດທິ 7,65 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 34,34 ລ້ານໂດລາ ແລະ ຂາຍໂດລາໄດ້ 41,98 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 491,38 ລ້ານບາດ (ໃນນີ້ ຊື້ບາດໄດ້ 297,69 ລ້ານບາດ ແລະ ຂາຍບາດໄດ້ 789,07 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 15,60% ແລະ ເງິນບາດ ເພີ່ມຂຶ້ນ 1,11%.

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈຳນວນ 10,70 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 117,40 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 5,78 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 210,00 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາໄດ້ສຸດທິ ຈຳນວນ 0,31 ລ້ານໂດລາ ແລະ ຊື້ເງິນບາດໄດ້ສຸດທິ ຈຳນວນ 0,06 ລ້ານບາດ.

**ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ**

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 02-09/09/2014 | | ອາທິດນີ້ 09-15/09/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 16,17 | 137,58 | 18,21 | 146,18 | 12,61% | 6,25% |
| - ທ/ຄທຸລະກິດອື່ນໆ | 18,40 | 153,20 | 16,13 | 151,52 | -12,35% | -1,10% |
| ລວມຊື້: | 34,57 | 290,78 | 34,34 | 297,69 | -0,67% | 2,38% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 14,51 | 223,02 | 20,95 | 299,74 | 44,40% | 34,40% |
| - ທ/ຄທຸລະກິດອື່ນໆ | 16,94 | 561,06 | 21,03 | 489,33 | 24,14% | -12,79% |
| ລວມຂາຍ: | 31,45 | 784,08 | 41,98 | 789,07 | 33,49% | 0,64% |
| ຊື້-ຂາຍສຸດທິ ທທກ | 3,12 | -493,30 | -7,65 | -491,38 | -345,16% | -0,39% |
| ຜິດດ່ຽງ ຊື້-ຂາຍ | 9,02 | -169,65 | -22,27 | -165,06 | -312,04% | 458,44% |
| ມູນຄ່າການຊື້-ຂາຍ | 66,02 | 1.074,87 | 76,32 | 1.086,77 | 15,60% | 1,11% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 2,30 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,00 | 112,00 | 5,78 | 210,00 | | |
| ຊື້-ຂາຍສຸດທິ ທຫລ | -0,70 | -112,00 | -5,78 | -210,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 6,18 | 106,08 | 10,70 | 117,40 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,46 | 0,00 | 0,35 | 0,06 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,14 | 0,00 | 0,05 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 0,31 | 0,00 | 0,31 | 0,06 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 09/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,00% ຫຼຸດລົງ 0,62% ຈາກ 3,62% ໃນເດືອນ 8/2014.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 38,02 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 7% ທຽບໃສ່ອາທິດຜ່ານມາ. ໄດ້ອອກໃບຢັ້ງຢືນການນຳເຂົ້າທຶນຜ່ານລະບົບທະນາຄານຂອງບໍລິສັດລົງທຶນຕ່າງປະເທດ ຈຳນວນ 5 ບໍລິສັດ ເປັນຈຳນວນ 45,25 ລ້ານໂດລາສະຫະລັດ; ອະນຸຍາດໃຫ້ ບໍລິສັດລົງທຶນຈາກຕ່າງປະເທດ ກູ້ຢືມເງິນຈາກຕ່າງປະເທດ ຈຳນວນ 1 ບໍລິສັດ ເປັນຈຳນວນເງິນ 647,5 ລ້ານໂດລາສະຫະລັດ. ນອກຈາກນັ້ນ ໄດ້ສຳເລັດການປັບປຸງຮ່າງກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ຕາມມະຕິຂອງກອງປະຊຸມລັດຖະບານ ເພື່ອກະກຽມນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ໄດ້ຄົ້ນຄວ້າລາຍງານຂໍທິດທ່ານ ຜູ້ວ່າການ ທຫລ ກ່ຽວກັບການສະເໜີຂອງທະນາຄານ

ຮ່ວມພັດທະນາ ໃນການໃຫ້ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຕິດຕັ້ງຕູ້ ATM ທີ່ສາມາດຖອນເປັນເງິນຕາຕ່າງປະເທດໄດ້ ຢູ່ກາຊິໂນທີ່ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ.

ລົງເຄື່ອນໄຫວການສົ່ງເສີມການນຳໃຊ້ເງິນກີບ ຮ່ວມກັບຂະບວນການຂອງ 3 ອົງການຈັດຕັ້ງມະຫາຊົນ ທຫລ, ພ້ອມທັງສຳຫຼວດຄວາມຄິດເຫັນຂອງສັງຄົມຕໍ່ການສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ ຢູ່ບັນດາຫ້າງຮ້ານເຂດເມືອງໄຊເສດຖາ, ສືບຕໍ່ນຳເອົາແຈ້ງການກ່ຽວກັບການຕິດລາຄາສິນຄ້າ ແລະ ຄ່າບໍລິການເປັນເງິນກີບ ຂອງພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ, ກະຊວງອຸດສາຫະກຳ ແລະ ການຄ້າລົງໂຄສະນາໃຫ້ກັບບັນດາຫ້າງຮ້ານຕ່າງໆໃນຂອບເຂດເມືອງໄຊເສດຖາ.

**2.6 <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.059 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 31,88% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 450,81 ຕື້ກີບ ຫຼຸດລົງ 55,18% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (12-18/09/2014) ມີຈຳນວນ 822 ຄັ້ງ ໂດຍມີມູນຄ່າ 417,3 ຕື້ກີບ ເພີ່ມຂຶ້ນ 157,9% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 313 ຄັ້ງ.

**2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.433,52 ຈຸດ ຫຼຸດລົງ 0,14% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນ ທັງໝົດ 90.168 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 653,82 ລ້ານກີບ ຫຼຸດລົງ 54,92% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍ ສະເລ່ຍກວມເອົາ 44,98% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.816 ກີບ/ຮຸ້ນ ຫຼຸດລົງ 28 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 23.312 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 182,20 ລ້ານກີບ ຫຼຸດລົງ 24,08% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 45,22% ຂອງມູນຄ່າການຊື້-ຂາຍຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,36%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.051 ກີບ/ຮຸ້ນ ເພີ່ມຂຶ້ນ 1 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 66.656 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 469,98 ລ້ານກີບ ຫຼຸດລົງ -61,14% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 48,92% ຂອງມູນຄ່າການຊື້-ຂາຍຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,22%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,64 ລ້ານກີບ ເພີ່ມຂຶ້ນ 100% ເມື່ອທຽບໃສ່ອາທິດຜ່ານມາ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

**3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>**

- ສຳເລັດການຕ້ອນຮັບ: ❶ ຕ້ອນຮັບຊ່ຽວຊານຈາກ IMF ທີ່ມາຈັດສຳມະນາໃຫ້ແກ່ພະນັກງານ ທຫລ ພາຍໃຕ້ຫົວຂໍ້ "Interbank Market" ທີ່ ທຫລ, ❷ ຕ້ອນຮັບ ທ່ານ ນ. Sally BURNINGHAM ຫົວໜ້າຫ້ອງການ ທະນາຄານໂລກ (WB) ປະຈຳ ສປປ ລາວ ທີ່ສະເໜີຂໍເຂົ້າຢ້ຽມຄຳນັບ ທ່ານ ຜູ້ວ່າການ ທຫລ;
- ສຳເລັດການເຂົ້າຮ່ວມກອງປະຊຸມແບບຊ່ອງໜ້າ ເພື່ອລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ Action Plan ທີ່ເມືອງ ຊຽມລຽບ, ປະເທດກຳປູເຈຍ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີກຳນົດ.

- ສໍາເລັດການຄົ້ນຄວ້າການກໍານົດໂທດທາງອາຍາໃນກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍອາກອນ ແລະ ກົດໝາຍວ່າດ້ວຍອາຍາ ເພື່ອປະກອບຂໍ້ມູນເຂົ້າໃນຕາຕາລາງຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການດໍາເນີນງານ (Action Plan);
- ສໍາເລັດການຈໍາໜ່າຍພັນທະບັດກະຊວງການເງິນ ຄັ້ງທີ 2 ຈໍານວນ 97 ຕື້ກີບ;
- ສໍາເລັດການເຂົ້າຮ່ວມສໍາມະນາ ໃນຫົວຂໍ້: "Networking Event 2014" ຢູ່ປະເທດ ອິນໂດເນເຊຍ;
- ສໍາເລັດປັບປຸງຂໍ້ມູນລະຫັດເງິນກູ້ຂອງທະນາຄານ SHB ທີ່ມີເລກລະຫັດເກີນ 30 ຕົວເລກ.

III. **<u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດ ງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າກ່ຽວກັບການເຂົ້າເປັນສະມະຊິກ AFI (ມູນລະນິທິໃນການເຂົ້າເຖິງແຫຼ່ງທຶນຢ່າງທົ່ວເຖິງ), ❷ ຄົ້ນຄວ້າມາດຕະຖານບັນຊີສາກົນສະບັບທີ IAs 34 "ຂໍ້ມູນຂ່າວສານລາຍງານການເງິນ", ❸ ຄົ້ນຄວ້າ ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກໍາລຸ່ມກົດໝາຍ ເພື່ອນໍາສະເໜີຂັ້ນເທິງ, ❹ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT;
- ສືບຕໍ່ປັບປຸງຂໍ້ມູນຕາມມະຕິຂອງກອງປະຊຸມສະພາບໍລິຫານ ສທຄ ສະໄໝສາມັນ ຄັ້ງທີ II ປະຈໍາປີ 2014;
- ສືບຕໍ່ປະຕິບັດວຽກງານຂາຍສິດນໍາໃຊ້ທີ່ດິນສອງຟາກທາງຖະໜົນວຽງຈັນ 450 ປີ.

ເຫັນແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ອຸດຕະລາ ແກ້ວທາວົງ